ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ 137/ນຍ

ນະຄອນຫຼວງວຽງຈັນ, ວັນທີ 03.05.2007.

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການພັດທະນາ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ 2006-2020

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ ປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 03/ສພຊ, ລົງວັນທີ 08 ເມສາ 2000.
- ອີງຕາມ ມະຕິກອງປະຊຸມລັດຖະບານ ສະໄໝສາມັນ ຄັ້ງວັນທີ 20-22 ມີນາ 2007.
- ອີງຕາມ ເອກະສານສະເໜີຂອງລັດຖະມົນຕີວ່າການ ກະຊວງສຶກສາທິການ ສະບັບເລກທີ 240/ສສ.2007, ລົງວັນທີ 11 ເມສາ 2007.

ນາຍົກລັດຖະມົນຕີ ອອກດຳລັດ :

ມາດຕາ 1 : ຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດ ການພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ 2006-2020.

ມາດຕາ 2 : ໃຫ້ກະຊວງສຶກສາທິການ ເປັນເຈົ້າການປະສານສົມທົບ ກັບ ບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄ້ວາ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ.

ມາດຕາ 3 : ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫລວງ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງ.

ມາດຕາ 4 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ**

ບົວສອນ ບຸບຜາວັນ